ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.COM

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເລກທີ 0594/ສ.ອ.ນ

ນະຄອນຫຼວງວຽງຈັນ, ວັນທີ 30 ມີນາ 2020

ແຈ້ງການ

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

ເລື່ອງ: ເລື່ອນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ທີ່ຈະຈັດຂຶ້ນໃນ ວັນທີ 02 ເມ ສາ 2020 ອອກໄປໂດຍບໍ່ມີກຳນົດ.

- **ອີງຕາມ** ແຈ້ງການຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ເລກທີ 005/ສພກ, ລົງວັນທີ 02 ມີນາ 2020.
- **ອີງຕາມ** ຄຳສັ່ງ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ເລກທີ 06/ນຍ, ລົງວັນທີ 29 ມີນາ 2020.
- **ອີງຕາມ** ໜັງສືສະເໜີຂໍເລື່ອນການຈັດກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2019 ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເລກທີ 0573/ສ.ອ.ນ, ລົງວັນທີ 27 ມີນາ 2020.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (“**ບໍລິສັດ**”) ຂໍເປັນກຽດຮຽນແຈ້ງມາຍັງທ່ານຜູ້ຖືຮຸ້ນຂອງບໍລິສັດ ຮັບຊາບ ວ່າ ບໍລິສັດຂອງພວກເຮົາ ຂໍເລື່ອນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຂອງບໍລິສັດ ທີ່ແຈ້ງໄປກ່ອນໜ້ານີ້ ຊຶ່ງ ຈະຈັດຂຶ້ນໃນ ວັນທີ 02 ເມສາ 2020 ອອກໄປກ່ອນໂດຍບໍ່ມີກຳນົດ, ເພື່ອຮັບປະກັນຄວາມປອດໄພຂອງບັນດາຜູ້ຖືຮຸ້ນທີ່ຈະ ເຂົ້າຮ່ວມກອງປະຊຸມ ແລະ ທຸກຄົນທີ່ກ່ຽວຂ້ອງໃນການຈັດກອງປະຊຸມ. ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດ COVID-19 ຢູ່ປະເທດລາວເຮົາໃນປະຈຸບັນ ແລະ ເພື່ອປະຕິບັດຕາມແຈ້ງການຂອງ ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບ ຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ເລກທີ 005/ສພກ ລົງວັນທີ 02 ມີນາ 2020 ທີ່ບໍ່ໃຫ້ມີການ ຊຸມນຸມ ຫລື ການຈັດກອງປະຊຸມ ທີ່ມີຄົນເຂົ້າຮ່ວມຈຳນວນຫລາຍ ໃນໄລຍະນີ້ ແລະ ເພື່ອເປັນການປ້ອງກັນການແຜ່ ລະບາດຂອງພະຍາດດັ່ງກ່າວ. ຖ້າຫາກສະຖານະການກັບມາເປັນສະພາບປົກກະຕິແລ້ວ ບໍລິສັດພວກເຮົາ ພ້ອມທີ່ຈະດຳເນີນ ການຈັດກອງປະຊຸມ ແລະ ຈະແຈ້ງ ວັນ, ເວລາ, ສະຖານທີ່ ການຈັດກອງປະຊຸມໃໝ່ອີກຄັ້ງ ໃຫ້ແກ່ຜູ້ຖືຮຸ້ນຮັບຊາບ. ຫວັງ ຢ່າງຍິ່ງວ່າ ບັນດາຜູ້ຖືຮຸ້ນຄົງຈະເຂົ້າໃຈກັບສະພາບການທີ່ເກີດຂຶ້ນໃນປະຈຸບັນນີ້.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງຜູ້ຖືຮຸ້ນທຸກທ່ານເພື່ອຮັບຊາບ ແລະ ເຂົ້າໃຈມາ ນະທີ່ນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ຜູ້ອຳນວຍການໃຫຍ່

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດທນາ ສຸຄະບັນດິດ